**ມິຊຊາອາທິດທີ 2 ກຳນົດບຳເພັນສິນ B**

**ວັນທີ 28 ກຸມພາ 2021**



**ພຣະວໍລະສານໂດຍນັກບຸນມັກໂກ 9, 2-10**

ໃນເວລານັ້ນ, ພຣະເຢຊູເຈົ້າໄດ້ພາເປໂຕ, ຢາໂກເບແລະຢວງເທົ່ານັ້ນຂຶ້ນພູສູງໜ່ວຍໜຶ່ງ. ພຣະອົງໄດ້ສຳແດງພຣະອົງຮຸ່ງເຮືອງຕໍ່ໜ້າພວກເຂົາ. ເຄື່ອງທົງຂອງພຣະອົງກາຍເປັນສີຂາວເຫລື້ອມ, ຈົນວ່າບໍ່ມີຄົນຊັກຜ້າໃດໆໃນໂລກສາມາດຊັກໃຫ້ຂາວງາມແບບນີ້ໄດ້. ແລ້ວທ່ານເອລີພ້ອມກັບໂມແຊໄດ້ປາກົດຕົວໃຫ້ພວກເຂົາເຫັນ. ທັງສອງສົນທະນາກັບພຣະເຢຊູເຈົ້າ. ເປໂຕຈຶ່ງທູນພຣະອົງວ່າ: “ພຣະອາຈານເອີຍ, ພວກເຮົາຢູ່ບ່ອນນີ້ເກີນວ່າມ່ວນຫລາຍ. ພວກຂ້ານ້ອຍຈະປຸກຜາມຂຶ້ນສາມຫລັງ. ຫລັງໜຶ່ງຖະຫວາຍພຣະອາຈານ, ຫລັງໜຶ່ງຖະຫວາຍໂມແຊແລະອີກຫລັງໜຶ່ງຖະຫວາຍເອລີ. ເປໂຕເວົ້າໄປໂດຍບໍ່ເຂົ້າໃຈຫຍັງ, ຍ້ອນທັງສາມຕົກໃຈຢ້ານ. ພໍດີມີເມກກ້ອນໜຶ່ງ ມາປົກບັງພວກເຂົາໄວ້ແລະມີສຽງດັງມາຈາກເມກວ່າ: “ຜູ້ນີ້ແມ່ນບຸດສຸດທີ່ຮັກຂອງເຮົາ, ຈົ່ງເຊື່ອຟັງພຣະອົງເຖີດ.” ທັນທີພວກສາວົກຫລຽວເບິ່ງອ້ອມໆບໍ່ເຫັນໃຜ, ເຫັນແຕ່ພຣະເຢຊູເຈົ້າຜູ້ດຽວປະທັບຢູ່ກັບພວກເຂົາ.

ເວລາລົງຈາກພູ, ພຣະອົງຊົງຫ້າມພວກເຂົາບໍ່ໃຫ້ເລົ່າເຫດການທີ່ໄດ້ເຫັນນັ້ນໃຫ້ຜູ້ໃດຟັງຈົນຮອດເວລາບຸດມະນຸດຈະໄດ້ກັບຄືນຊີບຈາກພວກຜູ້ຕາຍ. ພວກສາວົກທັງສາມກໍຮັກສາຄວາມເວົ້ານັ້ນໄວ້ພ້ອມທັງໂຈດກັນວ່າ:ຄຳວ່າ: “ກັບຄືນຊີບຈາກພວກຜູ້ຕາຍນັ້ນໝາຍຄວາມວ່າແນວໃດ?”

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມກ 9, 2-10**

ວັນອາທິດທີ່ຜ່ານມາ, ພວກເຮົາໄດ້ພ້ອມກັບພຣະເຢຊູເຈົ້າເຂົ້າໄປໃນທີ່ປ່ຽວເພື່ອຈຳສິນພາວະນາເປັນເວລາສີ່ສິບວັນ. ວັນນີ້, ພວກເຮົາພ້ອມກັບພຣະເຢຊູເຈົ້າເປໂຕ, ຢາໂກເບແລະຢວງຂຶ້ນໄປບົນພູເຂົາເພື່ອພົບພໍ້ກັບພຣະເຈົ້າ.

ໃນບົດອ່ານທີໜຶ່ງຈາກໜັງສືປະຖົມມະການ, ພຣະເຈົ້າໄດ້ທົດລອງອາບຣາຮຳໂດຍໃຫ້ເພິ່ນນຳລູກຊາຍດຽວຂອງຕົນຄືອີຊາອັກຂຶ້ນໄປບົນພູໜ່ວຍໜຶ່ງແລ້ວຂ້າເປັນເຄື່ອງບູຊາຖະຫວາຍແດ່ພຣະເຈົ້າ. ຕໍ່ໜ້າຄຳຮ້ອງຂໍຂອງພຣະເຈົ້ານີ້, ອາບຣາຮຳກໍບໍ່ໄດ້ລັງເລໃຈຍ້ອນທ່ານເຊື່ອໝັ້ນໃນພຣະເຈົ້າ. ອາໄສຄວາມເຊື່ອນີ້ທ່ານພ້ອມທີ່ຈະຂ້າຖະຫວາຍລູກຊາຍດຽວຂອງຕົນໃຫ້ພຣະເຈົ້າ. ທ້າຍສຸດ, ພຣະເຈົ້າກໍໄດ້ເຫັນຄວາມເຊື່ອທີ່ໜັກແໜ້ນຂອງອາບຣາຮຳແລະບໍ່ໃຫ້ທ່ານທຳຮ້າຍອີຊາອັກ. ຈາກນັ້ນ, ພຣະເຈົ້າກໍໄດ້ອວຍພອນໃຫ້ອາບຣາຮຳມີບຸດຫລານສືບເຊື້ອສາຍຫລວງຫລາຍດັ່ງດາວໃນທ້ອງຟ້າແລະເມັດຊາຍແຄມທະເລ. ນານາຊາດຈະໄດ້ຮັບພຣະພອນຈາກເຊື້ອສາຍຂອງທ່ານ.

ການທີ່ອາບຣາຮຳຂ້າຖະຫວາຍລູກຊາຍດຽວໃຫ້ພຣະເຈົ້ານີ້ເປັນຮູບພາບບົ່ງບອກລ່ວງໜ້າເຖິງພຣະບິດາເຈົ້າທີ່ຈະມອບບຸດຊາຍດຽວຂອງຕົນເປັນເຄື່ອງບູຊາໄຖ່ບາບມະນຸດ. ນັກບຸນເປົາໂລໃນບົດອ່ານທີສອງກໍໄດ້ປະກາດສິ່ງນີ້ໃຫ້ສັດຕະບຸລຸດຂອງທ່ານຢູ່ນະຄອນໂຣມາວ່າ:"ພຣະເຈົ້າບໍ່ໄດ້ຫວງແຫນພຣະບຸດຂອງພຣະອົງ, ແຕ່ຊົງມອບພຣະບຸດນັ້ນເພື່ອເຮົາທັງຫລາຍ. ດັ່ງນັ້ນ, ຈະມີສິ່ງໃດອີກບໍທີ່ພຣະເຈົ້າຈະບໍ່ປະທານໃຫ້ພວກເຮົາ?

ສ່ວນໃນພຣະວໍລະສານ, ພຣະເຢຊູເຈົ້າກໍພາເປໂຕ, ຢາໂກເບແລະຢວງຂຶ້ນໄປບົນພູເຂົາເພື່ອສຳແດງພຣະກາຍຮຸ່ງເຮືອງຂອງພຣະອົງໃຫ້ພວກເຂົາເຫັນ. ດຽວນີ້ພວກລູກສິດໄດ້ເຫັນໃບໜ້າອັນຮຸ່ງເຮືອງຂອງພຣະເຢຊູເຈົ້າ. ຕໍ່ໄປ, ພວກເຂົາກໍຈະເຫັນໃບໜ້າທີ່ເຕັມດ້ວຍບາດແຜຂອງພຣະອົງ. ຍ້ອນວ່າ, ກ່ອນທີ່ຈະໄປເຖິງສີມຸງຄຸນນັ້ນ, ບຸດແຫ່ງມະນຸດຈຳຕ້ອງຖືກທໍລະມານແລະຕາຍ. ແຕ່ວັນທີສາມພຣະອົງຈະກັບເປັນຄືນມາຢ່າງຮຸ່ງເຮືອງ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ຮູ້ຈັກໃຊ້ເວລາເພື່ອເພັ່ງຊົມພຣະອົງຜູ້ເປັນພຣະບຸດອົງດຽວຂອງພຣະເຈົ້າທີ່ໄດ້ລົງມາຮັບທໍລະມານແລະຕາຍເປັນເຄື່ອງບູຊາໄຖ່ບາບລູກ. ໂຜດໃຫ້ລູກຮູ້ຈັກເປັນທຸກກັບໃຈແລະຫັນມາເຊື່ອໃນພຣະອົງຜູ້ເປັນອົງແຫ່ງຄວາມຣອດຂອງລູກດ້ວຍເທີ້ນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ